ບົດທີ 14

# ໂລກຮ້າຍແຮງທີ່ຕ້ອງໄດ້ຮັບການປິ່ນປົວພິເສດຈາກແພດ

ໂລກທີ່ຈະກ່າວໃນບົດນີ້ມັກຈະເປັນໂລກທີ່ປິ່ນປົວໃຫ້ດີຍາກ ຫຼື ປິ່ນປົວບໍ່ໄດ້ຖ້າບໍ່ໄດ້ຮັບການຊ່ວຍເຫຼືອຈາກແພດ. ໂລກຫຼາຍຢ່າງຕ້ອງປິ່ນປົວດ້ວຍຢາພິເສດທີ່ຫາຍາກໃນຊົນນະບົດ. ການປິ່ນປົວແບບພື້ນເມືອງຈະບໍ່ສາມາດຮັກສາໄດ້. ຖ້າມີຄົນເປັນໂລກໃດໜຶ່ງຄືແນວນີ້ການໄປຫາແພດໄວເທົ່າໃດໂອກາດທີ່ຈະດີກໍ່ມີຫຼາຍເທົ່ານັ້ນ.

ຂໍ້ຄວນລະວັງ: ການເຈັບປ່ວຍຕ່າງໆທີ່ກ່າວໃນບົດອື່ນໆກໍອາດຈະຮ້າຍແຮງເຊັ່ນກັນ ແລະ ຕ້ອງການປິ່ນປົວຈາກແພດ ຄືກັນ. ຈົ່ງເບິ່ງອາການຂອງໂລກທີ່ເປັນອັນຕະລາຍຮ້າຍແຮງ (ໜ້າ 42).

## ວັນນະໂລກ(TB)

ວັນນະໂລກປອດເປັນໂລກຊໍາເຮື້ອ ແລະ ຕິດແປດໄດ້ງ່າຍທີ່ໃຜໆກໍຕິດໄດ້. ແຕ່ມັກເກີດຂຶ້ນກັບຄົນອາຍຸຢູ່ລະຫວ່າງ 15 ຫາ 35 ປີ ຫຼາຍກວ່າໂດຍສະເພາະຢ່າງຍິ່ງ ຜູ້ທີ່ອ່ອນເພຍຜູ້ຂາດອາຫານ, ເປັນໂລກເອດສ (HIV) ແລະ ຜູ້ຢູ່ກັບຄົນເຈັບທີ່ເປັນໂລກນີ້ (TB). ຄົນທີ່ເປັນໂລກເອດສ (ໜ້າ 399) ມັກຈະປ່ວຍໜັກເມື່ອເປັນວັນນະໂລກ. ສະນັ້ນ ຜູ້ທີ່ເປັນໂລກເອດສຄວນໄດ້ຮັບການກວດວ່າເປັນວັນນະໂລກ ຫຼື ບໍ່. ບາງຄັ້ງການໃຊ້ຢາອີໂຊເນຍສິດ (Isoniazid) (ເບິ່ງໜ້າ 361) ກໍ່ສາມາດປ້ອງກັນການຂະຫຍາຍຕົວຂອງວັນນະໂລກໄດ້. ຊຸກຍູ້ໃຫ້ຜູ້ທີ່ເປັນວັນນະໂລກໄປກວດເບິ່ງວ່າເຂົາເປັນໂລກເອດສ ຫຼື ບໍ່, ຖ້າເປັນແມ່ນຄວນໄດ້ຮັບການຮັກສາ.

ວັນນະໂລກເປັນໂລກທີ່ສາມາດປິ່ນປົວໃຫ້ເຊົາໄດ້. ແຕ່ໃນທຸກໆປີກໍ່ຍັງມີຄົນຕາຍຍ້ອນໂລກນີ້ເປັນຫຼາຍພັນຄົນ. ການປິ່ນປົວວັນນະໂລກແຕ່ຫົວທີເປັນສິ່ງຈໍາເປັນຫຼາຍ ພ້ອມທັງເປັນການປ້ອງກັນການແຜ່ເຊື້ອ ແລະ ເພື່ອທີ່ຈະປິ່ນປົວຄົນເຈັບໃຫ້ເຊົາໄດ້. ດັ່ງນັ້ນ ທ່ານຈໍາເປັນຕ້ອງຮູ້ລັກສະນະອາການຂອງວັນນະ ໂລກ ແລະ ຕິດຕາມຄົນເຈັບທີ່ເປັນວັນນະໂລກເພື່ອສົ່ງເຂົ້າໄປຮັບການປິ່ນປົວແຕ່ທໍາອິດ.

ອາການທົ່ວໆໄປຂອງວັນນະໂລກ:

- ໄອຊໍາເຮື້ອເປັນເວລາຫຼາຍກວ່າ 3 ອາທິດໂດຍສະເພາະຫຼັງຈາກຕື່ນນອນ.
- ຕອນຄໍ່າແມ່ນມີໄຂ້ໜ້ອຍໜຶ່ງ ແລະ ມີເຫື່ອອອກໃນຕອນກາງຄືນ.
- ອາດເຈັບໜ້າເອິກ ຫຼື ເຈັບຫລັງເບື້ອງເທິງ
- ນໍ້າໜັກລົດລົງຕະຫຼອດ ແລະ ອ່ອນເພຍລົງເລື້ອຍໆ.



ໃນກໍລະນີທີ່ຮ້າຍແຮງ ຫຼື ເປັນມາດົນ:

- -ໄອອອກເລືອດ (ຕາມທໍາມະດາມີເລືອດອອກໜ້ອຍໜຶ່ງ ແຕ່ບາງຄົນກໍ່ອອກຫຼາຍ)
- ຈ່ອຍຜອມຊູດໂຊມ
- ສຽງແຫບໆ(ເວລາເປັນຫຼາຍໆ)

ໃນເດັກນ້ອຍ: ອາການໄອອາດຈະມີອາການສະແດງອອກຊ້າສະນັ້ນຄວນສັງເກດເບິ່ງອາການທີ່ສະແດງອອກດັ່ງຕໍ່ໄປນີ້:

- ນໍ້າໜັກລຸດລົງຢ່າງຕໍ່ເນື່ອງ.
- ມີໄຂ້ເປັນປະຈໍາ.
- ຜິວມີສີຈາງລົງ.
- ຄໍໄຄ່ (ຕ່ອມນໍ້າເຫຼືອງອັກເສບ) ຫຼື ທ້ອງໄຄ່ (ໜ້າ 20).

ວັນນະໂລກມັກເປັນແຕ່ຢູ່ປອດເທົ່ານັ້ນ. ແຕ່ວ່າມັນສາມາດມີຜົນກະທົບຕໍ່ພາກສ່ວນຕ່າງໆຂອງຮ່າງກາຍໄດ້. ຢູ່ໃນເດັກນ້ອຍອາດເຮັດໃຫ້ເປັນໂລກເຍື່ອຫຸ້ມສະໝອງອັກເສບໄດ້ (ເບິ່ງໜ້າ 185). ສໍາລັບບັນຫາໂລກຜິວໜັງທີ່ເກີດຈາກເຊື້ອວັນນະ ໂລກໃຫ້ເບິ່ງໜ້າ 212.

HLI Seattle
Health Leadership International
Field Draft Copy

ຖ້າທ່ານຄິດວ່າທ່ານອາດຈະຕິດເຊື້ອວັນນະໂລກ:
ຈົ່ງໄປຫາແພດເມື່ອເລີ່ມມີອາການວັນນະໂລກປະກົດຂຶ້ນເທື່ອທຳອິດ. ຈົ່ງໄປໂຮງໝໍບ່ອນທີ່ສາມາດກວດວັນນະໂລກໄດ້ ສ່ອງໄຟຟ້າ ແລະ ກວດສິ່ງທີ່ໄອອອກມາ (ຂີ້ເທີ ຫຼື ຂີ້ມູກ) ເພື່ອຮູ້ວ່າທ່ານມີເຊື້ອໂລກຫຼືບໍ່? ສ່ວນຫຼາຍລັດ ຖະບານຈະບໍ່ໃຫ້ເສຍເງິນຄ່າປິ່ນປົວວັນນະໂລກ ຈົ່ງໄປສອບຖາມຂໍ້ມູນນຳໂຮງໝໍທີ່ໃກ້ທີ່ສຸດເພື່ອປິ່ນປົວວັນນະ ໂລກ ໃນການປິ່ນປົວແພດອາດຈະໃຫ້ໃຊ້ຢາດັ່ງຕໍ່ໄປນີ້:

- ຢາອີໂຊເນຍສິດ (Isoniazid) (ໜ້າ 360)
- ໄລແຟມປິນ (Rifampin) (ໜ້າ 360)
- ພີລາຊີນາໄມ (Pyrazinamide) (ໜ້າ 361)
- ເອແທມບູໂທນ(Ethambutol) (ໜ້າ 361)
- ສັກຢາສະເຕັບໂຕໄມຊິນ (Streptomycine) (ໜ້າ 361)

ສິ່ງສຳຄັນແມ່ນຄວນໃຊ້ຢາຕາມຄຳສັ່ງຂອງແພດເທົ່ານັ້ນ. ແຕ່ລະປະເທດແມ່ນມີການຮັກສາທີ່ແຕກຕ່າງກັນ, ແຕ່ວ່າຕາມທຳມະດາແລ້ວການປິ່ນປົວມີ 2 ສ່ວນ. ທ່ານຈະຕ້ອງໄດ້ກິນຢາ 4 ຊະນິດເປັນເວລາ 2 ເດືອນ ແລະ ໃຫ້ກວດເບິ່ງຂີ້ກະເທີ. ຖ້າເຈົ້າມີອາການດີຂຶ້ນຄວນຈະສືບຕໍ່ກິນຢາ 2 ຫາ 3 ຊະນິດອີກປະມານ 4 ເດືອນ. ຫຼັງຈາກນັ້ນແມ່ນໃຫ້ກວດເບິ່ງຄືນໃໝ່ວ່າເຊົາແທ້ແລ້ວ. ຢ່າຢຸດກິນຢາຖ້າທ່ານຍັງບໍ່ຮູ້ສຶກດີຂຶ້ນ. ໂລກນີ້ສາມາດເປັນຄືນໄດ້ ແລະ ສາມາດຕິດໃສ່ຄົນອື່ນໄດ້ອີກ, ເພາະວ່າຖ້າເປັນວັນນະໂຣກຄືນອີກຄັ້ງໜຶ່ງແມ່ນຈະຮັກສາຍາກກວ່າຄັ້ງທຳອິດທີ່ເປັນເພາະວ່າໂລກນີ້ດື້ຢາ (ເບິ່ງໜ້າ 361). ເພື່ອປິ່ນປົວວັນນະໂລກໃຫ້ຫາຍຂາດແມ່ນຕ້ອງໃຊ້ເວລາປະມານ 6 ເດືອນຫາຫຼາຍກວ່າໜຶ່ງປີ.

ກິນອາຫານຫຼາຍທີ່ດີເຊັ່ນ: ກິນອາຫານທີ່ມີໂປຼຕີນ ແລະ ມີວິຕາມິນສູງໃຫ້ຫຼາຍໆ ລວມທັງກິນອາຫານທີ່ໃຫ້ພະລັງງານດ້ວຍ (ໜ້າ 110 ຫາ 111). ການພັກຜ່ອນກໍ່ເປັນສິ່ງສຳຄັນທີ່ສຸດ, ຄວນເຊົາເຮັດວຽກ, ພັກຜ່ອນຈົນກວ່າຈະດີແທ້ ຫຼັງຈາກນັ້ນບໍ່ຄວນເຮັດວຽກຫຼາຍເກີນໄປຈົນເຮັດໃຫ້ເມື່ອຍ ຫຼື ຫາຍໃຈບໍ່ສະດວກ ແລະ ຈົ່ງພັກຜ່ອນ ແລະ ນອນຫຼັບໃຫ້ພຽງພໍສະເໝີ.

ວັນນະທີ່ເກີດຂຶ້ນໃນທຸກໆສ່ວນຂອງຮ່າງກາຍເຮົາ ຕ້ອງປິ່ນປົວແບບດຽວກັນກັບວັນນະໂລກປອດ, ແຕ່ການປິ່ນປົວແມ່ນຕ້ອງໃຊ້ໄລຍະເວລາດົນກ່ວາວັນນະໂລກຢູ່ສ່ວນອື່ນຂອງຮ່າງກາຍ. ນີ້ລວມທັງວັນນະໂລກໃນອາມີດ້ານ, ວັນນະໂລກໃນເຍື່ອທ້ອງ (ເບິ່ງຮູບຢູ່ໜ້າ 20), ວັນນະໂລກຜິວໜັງ (ເບິ່ງໜ້າ 212), ແລະ ວັນນະໂລກຕາມຂໍ້ຕໍ່ (ເຊັ່ນເປັນຢູ່ຫົວເຂົ່າ). ສຳລັບເດັກນ້ອຍທີ່ເປັນວັນນະໂລກກະດູກສັນຫຼັງຢ່າງຮຸນແຮງ ອາດຈະໄດ້ຮັບການຜ່າຕັດເພື່ອປ້ອງກັນການເປັນອຳມະພາດ. (ສາມາດເບິ່ງເພື່ອຂໍ້ມູນເພີ່ມເຕີມໃນ ເດັກນ້ອຍພິການໃນບ້ານ (Disabled Village Children) ໃນບົດ 21). ຄຳອະທິບາຍຮູບ: ວັນນະໂລກກະດູກສັນຫຼັງ.



ວັນນະໂຣກກະດູກສັນຫລັງ

ວັນນະໂລກເປັນໂລກຕິດແປດກັນໄດ້ງ່າຍຫຼາຍ. ໂລກນີ້ສາມາດແຜ່ລາມໂດຍທີ່ຜູ້ທີ່ເປັນພະຍາດນີ້ເມື່ອໄອເຊື້ອພະຍາດໄດ້ປົວໄປນຳອາກາດ. ສະນັ້ນທຸກໆຄົນ ແມ່ນສາມາດຕິດເຊື້ອນີ້ໄດ້ໂດຍສະເພາະແມ່ນເດັກທີ່ອາໃສຢູ່ຮ່ວມກັນກັບຄົນເປັນວັນນະໂລກແມ່ນມີອັດຕາສູງຕໍ່ການເປັນໂລກອື່ນໆໄດ້.
ຖ້າມີຄົນໃນເຮືອນເປັນວັນນະໂລກ:

- ຖ້າເປັນໄປແມ່ນໄດ້ໃຫ້ໝົດທຸກຄົນໃນຄອບຄົວໄປກວດວັນນະໂລກ.
- ໃຫ້ເດັກນ້ອຍສັກຢາກັນວັນນະໂລກດ້ວຍວັກແຊງ B.D.G.
- ໝົດທຸກຄົນໃນຄອບຄົວໂດຍສະເພາະເດັກນ້ອຍຄວນກິນອາຫານດີໆທີ່ເປັນປະໂຫຍດ.
- ຜູ້ທີ່ເປັນວັນນະໂລກຄວນກິນ ແລະ ນອນຕ່າງຫາກ. ຖ້າເປັນໄປໄດ້ ຄວນແຍກຫ້ອງນອນຈົນກວ່າຈະເຊົາໄອແທ້ໆ.
- ຜູ້ທີ່ເປັນວັນນະໂລກເວລາຈະໄອຄວນເອົາມື ຫຼື ຜ້າອັດປາກ ແລະ ບໍ່ຄວນຖົ່ມນ້ຳລາຍລົງພື້ນເຮືອນ.
- ສັງເກດເບິ່ງນ້ຳໜັກຂອງເດັກລຸດລົງບໍ ແລະ ອາການອື່ນໆຂອງວັນນະໂລກຂອງສະມາຊິກໃນຄອບຄົວ. ຄວນສັ່ງນ້ຳໜັກແຕ່ລະເດືອນໂດຍສະເພາະແມ່ນເດັກເຮັດແນວນີ້ຈົນກວ່າເຈົ້າແນ່ໃຈວ່າບໍ່ມີໃຜເປັນວັນນະໂລກ.

ວັນນະໂລກທີ່ເກີດຢູ່ໃນສະມາຊິກໃນຄອບຄົວແມ່ນເລີ່ມເປັນຢ່າງຊ້າ ແລະ ງຽບໆ. ແຕ່ຖ້າວ່າມີອາການສະແດງອອກແມ່ນຕ້ອງມີການກວດທັນທີ ແລະ ເລີ່ມຮັກສາເລີຍ.

ການປິ່ນປົວທີ່ຖືກຕ້ອງແຕ່**ຫົວ**ທີແມ່ນວິທີປ້ອງກັນທີ່ດີທີ່ສຸດ

HLI Seattle
Health Leadership International
Field Draft Copy

## ໂລກພິດວໍ້



ໂລກພິດວໍ້ເກີດຈາກໝາວໍ້ ຫຼື ສັດອື່ນໆ (ແມວ, ໝາໄນ, ໝາປ່າ, ແລະໂຕສະກັ້ງ) ທີ່ເປັນວໍ້ກັດ. ນອກຈາກນີ້ຍັງມີໝູ ແລະ ສັດຊະນິດອື່ນໆທີ່ອາດນຳເຊື້ອໂລກນີ້ມາໄດ້.
ອາການຂອງໂລກພິດວໍ້

**ອາການໃນສັດ:**

- ມີກິລິຍາທ່າທາງຜິດປົກກະຕິ ບາງເທື່ອເຫງົາບໍ່ຢູ່ບ່ອນເກົ່າ ຫຼື ໃຈຮ້າຍ.
- ປາກມີຟອດນ້ຳລາຍ, ກິນອາຫານ ຫຼື ນ້ຳບໍ່ໄດ້.
- ບາງເທື່ອສັດກໍ່ເປັນບ້າ ແລ້ວກັດຄົນ ຫຼື ສິ່ງຕ່າງໆທີ່ມັນພົບເຫັນ.
- ແລ້ວສັດກໍຈະຕາຍພາຍໃນ 5 ຫາ 7 ວັນ.

**ອາການທີ່ເກີດກັບຄົນ:**

- ປວດ ແລະ ຮູ້ສຶກຄັນບ່ອນຖືກສັດກັດ.
- ຫາຍໃຈບໍ່ປົກກະຕິຄືກັບຄົນຫາກໍ່ຮ້ອງໄຫ້ແລ້ວ.
- ກິນອາຫານຍາກ ແລະ ເຈັບປວດ, ແລະ ມີນ້ຳລາຍຊຸ້ນໆ ແລະ ໜຽວ.
- ຢູ່ດີໆແລ້ວສັກຂຶ້ນ ແລ້ວກໍຢູ່ຢ່າງສະຫງົບ.
- ເມື່ອໃກ້ຈະຕາຍເປັນຊັກ ແລະ ອຳມະພາດ.

**ດ້ວຍເຫດຜົນອັນໃດກໍ່ຕາມທີ່ເຮັດໃຫ້ທ່ານເຊື່ອວ່າສັດທີ່ກັດຄົນນັ້ນເປັນວໍ້ຄວນ:**

- ມັດ ຫຼື ຂັງສັດນັ້ນໄວ້ໜຶ່ງອາທິດ.
- ທຳຄວາມສະອາດຮອຍກັດໃຫ້ດີດ້ວຍສະບູ, ນ້ຳສະອາດ ແລະ ໄຮໂດຼເຈັນເປີລົກໄຊ (hydrogen peroxide) ຢ່າອັດປາກບາດປະເປີດໄວ້.
- ຖ້າສັດນັ້ນຕາຍກ່ອນ 1 ອາທິດ (ຫຼື ຖືກຂ້າກ່ອນ ຫຼື ຈັບບໍ່ໄດ້). ຈົ່ງເອົາຜູ້ຖືກກັດໄປໂຮງໝໍເພື່ອຮັບການສັກຢາແກ້ໂລກວໍ້ໃຫ້ຄົບຊຸດ.

ອາການທຳອິດຂອງໂລກວໍ້ຈະເກີດຂຶ້ນປະມານ 10 ມື້ ຫາ 2 ປີ ຫຼັງຈາກຖືກສັດກັດ (ຕາມປົກກະຕິ 3 ຫາ 7ອາທິດ). ການປິ່ນປົວຕ້ອງເລີ່ມກ່ອນທີ່ອາການຈະປາກົດຂຶ້ນເປັນຄັ້ງທຳອິດ. ຫຼັງຈາກອາການພິດວໍ້ເລີ່ມປາກົດຂຶ້ນ ແລ້ວບໍ່ມີການປິ່ນປົວໃດໆຈະບໍ່ສາມາດຊ່ວຍຊີວິດຄົນເຈັບໄວ້ໄດ້.

**ການປ້ອງກັນ:**

- ຂ້າ ແລະ ຝັງ (ຫຼືຈັບໃສ່ຄອກໄວ້ 1 ອາທິດ) ສັດທີ່ຄິດວ່າເປັນວໍ້.
- ຮ່ວມໄມ້ຮ່ວມມືສັກຢາກັນວໍ້ໃຫ້ໝາ.
- ເອົາເດັກນ້ອຍຫຼີກຈາກສັດທີ່ຄິດວ່າມັນປ່ວຍ ຫຼື ມີອາການຜິດປົກກະຕິ.

| |
|---|
| ຈົ່ງລະມັດລະວັງໃນການແຍກສັດທີ່ຄິດວ່າມັນເຈັບປ່ວຍ ຫຼື ມີອາການຜິດປົກກະຕິເຖິງແມ່ນວ່າ ມັນຈະບໍ່ກັດໃຜກໍ່ຕາມ ຖ້ານ້ຳລາຍມັນເຂົ້າໄປໃນບາດອາດເຮັດໃຫ້ຕິດເຊື້ອໂລກວໍ້ໄດ້. |

HLI Seattle
Health Leadership International
Field Draft Copy

## ບາດທະຍັກ

ບາດທະຍັກເກີດມາຈາກເຊື້ອໂລກທີ່ອາໃສຢູ່ໃນອາຈົມສັດ ຫຼື ຄົນ ເຂົ້າໄປ ໃນຮ່າງກາຍຂອງຄົນເຮົາໂດຍທາງບາດ. ໂດຍສະເພາະບາດທີ່ເລິກໆ ແລະ ບໍ່ສະອາດຈະເປັນອັນຕະລາຍຫຼາຍ.

## ບາດທີ່ອາດເປັນບາດທະຍັກໄດ້ງ່າຍ:

ບາດທີ່ເກີດຈາກສັດກັດ ໂດຍສະເພາະ ໝາ ແລະ ໝູກັດ.



ຖືກລູກປືນ ຫຼື ມີດບາດ.



ຫູທີ່ບ່ອງດ້ວຍເຂັມບໍ່ສະອາດ.



ບາດເກີດມາຈາກໜາມໝາກຈັບປັກ.



ບາດເກີດຈາກສ້ຽນ ສະເກັດ ຫຼື ຕະປູປັກ.



## ສາເຫດຂອງບາດທະຍັກໃນເດັກນ້ອຍເກີດໃໝ່:

ເຊື້ອບາດທະຍັກຜ່ານເຂົ້າທາງສາຍບືຂອງແອນ້ອຍ ເກີດໃໝ່ເພາະຂາດຄວາມສະອາດ ຫຼື ບໍ່ປະຕິບັດຕາມ ຂໍ້ຄວນລະວັງຈະມີໂອກາດເປັນບາດທະຍັກງ່າຍ ຂຶ້ນ...

- ຖ້າສາຍບືຖືກຕັດດ້ວຍເຄື່ອງຕັດທີ່ບໍ່ໄດ້ຮັບການຕົ້ມຂ້າເຊື້ອແລ້ວຮັກສາໄວ້ໃຫ້ສະອາດ ຫຼື
- ຖ້າສາຍບືບໍ່ຖືກຕັດຢູ່ມໍ່ໆກັບຮ່າງກາຍແອນ້ອຍ (ເບິ່ງໜ້າ 262) ຫຼື
- ຖ້າສາຍບືທີ່ຕັດໃໝ່ໆໄດ້ຖືກອັດໄວ້ແຈບໆໂພດ ຫຼື ບໍ່ໄດ້ຮັກສາໄວ້ໃຫ້ແຫ້ງໆ.

ເມື່ອຕັດສາຍບືຍາວຈະເຮັດໃຫ້ ເປັນບາດທະຍັກໄດ້ງ່າຍ.



HFI Seattle Health Leadership International Field Draft Copy

## ອາການຂອງບາດທະຍັກ:

- ມີບາດຕິດເຊື້ອ (ບາງເທື່ອກໍຫາບາດບໍ່ພົບ).
- ບໍ່ສະບາຍ ແລະ ກືນອາຫານຍາກ.
- ຄາງກະໄຕຄ້າງແລ້ວກ້າມຊີ້ນລຳຄໍ ແລະ ສ່ວນຕ່າງໆຂອງຮ່າງກາຍກໍ່ແຂງໄປພ້ອມກັນ. ມີບັນຫາໃນການຍ່າງ.
- ຊັກດ້ວຍຄວາມເຈັບປວດກະທັນຫັນເລີ້ມດ້ວຍຄາງກະໄຕສັ່ນ ແລ້ວເປັນໝົດທົ່ວຮ່າງກາຍ ຖ້າຍົກຍ້າຍ ຫຼື ຈັບບາຍຄົນເຈັບຈະເຮັດໃຫ້ເກີດອາການຊັກຈັງຂຶ້ນໃນທັນທີຄືຮູບນີ້:

ຖ້າມີສຽງແຮງໆ ຫຼື ແສງສະຫວ່າງເກີດຂຶ້ນໃນທັນທີທັນໃດ ຈະເຮັດໃຫ້ຄົນເຈັບຊັກຈັງແບບນີ້ໄດ້.



ໃນແອນ້ອຍເກີດໃໝ່ ອາການບາດທະຍັກມັກຈະເກີດຂຶ້ນ 3 - 10 ມື້ ຫຼັງຈາກເກີດ. ແອນ້ອຍຈະເລີ້ມໄຫ້ແອ່ວເລີຍໆ ແລະ ດູດນົມບໍ່ໄດ້. ບໍລິເວນສາຍບືຈະບໍ່ສະອາດ ຫຼື ມີອາການຕິດເຊື້ອ ຫຼັງຈາກນັ້ນຫຼາຍຊົ່ວໂມງ ຫຼື ຫຼາຍມື້ ຄາງກະໄຕກໍ່ຈະຄ້າງ ແລະ ອາການຂອງໂລກບາດທະຍັກອື່ນໆກໍ່ຈະເລີ້ມປາກົດຂຶ້ນ.

ການເລີ້ມຕົ້ນປິ່ນປົວບາດທະຍັກແຕ່ອາການທຳອິດປາກົດຂຶ້ນແມ່ນມີຄວາມຈຳເປັນທີ່ສຸດ. ຖ້າທ່ານສົງໃສວ່າຜູ້ໃດຜູ້ໜຶ່ງເປັນໂລກບາດທະຍັກ (ຫຼືແອນ້ອຍເກີດໃໝ່ໄຫ້ເລີຍໆ ຫຼື ເຊົາດູດນົມ) ຈົ່ງທຳການກວດດັ່ງຕໍ່ໄປນີ້:

ການກວດປະຕິກິລິຍາໂຕ້ຕອບຂອງຫົວເຂົ່າ:

ຢ່ອນຂາລົງຕາມສະບາຍ ເຄາະລຸ່ມຫົວເຂົ່າດ້ວຍໝາກກອກຄ່ອຍໆ.



ຖ້າຂາດີດຂຶ້ນເລັກໜ້ອຍສະແດງວ່າປົກກະຕິ.



ຖ້າຂາດີດຂຶ້ນສູງສະແດງວ່າເປັນອາການຂອງບາດທະຍັກເລັກໜ້ອຍ (ຫຼື ອາດເປັນໂລກເຍື່ອຫຸ້ມສະໝອງອັກເສບ ຫຼື ຖືກຢາເບື່ອບາງຢ່າງເຊັ່ນ: ຢາຂ້າໜູ).



ການກວດນີ້ມີປະໂຫຍດຫລາຍໂດຍສະເພາະເວລາທ່ານສົງໃສບາດທະຍັກໃນເດັກເກີດໃໝ່

ເມື່ອມີອາການຂອງບາດທະຍັກຈະເຮັດແນວໃດ?

ບາດທະຍັກເປັນໂລກທີ່ເຮັດໃຫ້ຄົນເຈັບຕາຍໄດ້ຖ້າຫາກບໍ່ປິ່ນປົວຢ່າງຖືກຕ້ອງ ແລະ ທັນການ. ຖ້າເລີ້ມເປັນຄວນໄປຫາແພດໂລດຖ້າການຊ່ວຍເຫຼືອຍັງມາບໍ່ເຖິງຄວນປະຕິບັດດັ່ງຕໍ່ໄປນີ້: ກວດຮ່າງກາຍຢ່າງລະອຽດເພື່ອຊອກຫາບາດແຜ ສ່ວນໃຫຍ່ບາດມັກມີໜອງ. ໃຫ້ເປີດປາກບາດອອກແລ້ວລ້າງດ້ວຍນ້ຳສຸກ ແລະ ສະບູ ເອົາສິ່ງທີ່ເປື້ອນໜອງ, ໜາມ ຫຼື ເກັດບາດອອກໃຫ້ໝົດ. ຖ້າມີນ້ຳໄຮ ໂດຼເຢັນ (hydrogen) ກໍຈົ່ງເອົາໃສ່ເພື່ອລ້າງບາດແຜນັ້ນອີກເທື່ອໜຶ່ງ.

HLI Seattle
Health Leadership International
Field Draft Copy

**ເມື່ອມີອາການຂອງບາດທະຍັກຈະເຮັດແນວໃດ? (ສືບຕໍ່)**

- ສັກຢາໂປຼເຄນເປນີຊີລີນ 1 ລ້ານໜ່ວຍໂລດ. ຫຼັງຈາກນັ້ນໃຫ້ສັກຕື່ມອີກທຸກໆ 12 ຊົ່ວໂມງ (ໜ້າ352) (ສຳລັບແອນ້ອຍໃຊ້ຢາເປນີຊີລີນຝຸ່ນຈະດີກວ່າຖ້າບໍ່ມີຢາເປນີຊີລີນໃຫ້ໃຊ້ຢາຕ້ານເຊື້ອຊະນິດອື່ນເຊັ່ນ: ເຕຕຼາຊີລີນກໍໄດ້.
- ຖ້າຊອກຢາແກ້ພິດບາດທະຍັກ (Tetanus Antitoxin) ໄດ້ຈຶ່ງສັກ 40.000 ໜ່ວຍເຖິງ 50.000 ໜ່ວຍ ຫຼື ຈຶ່ງສັກຢາຮິວແມນ ອິມມູນໂກຼບິວລິນ (Human Immune Globulin) 5.000 ໜ່ວຍ. ແຕ່ຄວນລະມັດລະວັງໃນການປະຕິບັດຕາມຄຳແນະນຳກ່ຽວກັບວິທີການໃຊ້ຢາທຸກປະການ (ເບິ່ງໜ້າ 70 ແລະ 389). ການໃຊ້ຢາຮິວແມນ ອິມມູນໂກຼບິວລິນ ມີອັນຕະລາຍກັບການແພ້ຢາໜ້ອຍກວ່າການໃຊ້ຢາ ຊະນິດອື່ນ, ແຕ່ມັນອາດມີລາຄາແພງ ແລະ ຊອກຊື້ຍາກ.
- ຖ້າຄົນເຈັບຍັງກືນອາຫານໄດ້ ຈຶ່ງໃຫ້ກິນຂອງແຫຼວທີ່ໃຫ້ປະໂຫຍດເລື້ອຍໆ ແລະ ຈິບໆເທື່ອລະໜ້ອຍ.
- ເພື່ອຄວບຄຸມອາການຊັກໃຫ້ໃຊ້ຢາໄດຊີແພມ (Diazepam) (ຍີ່ຫໍ້ ວາລີອອມໜ້າ Valium) ທາງປາກ ຫຼື ທາງທະວານໜັກ (ຮູຖ່າຍໜັກ) (ແຕ່ສຳລັບປະລິມານວ່າຈະໃຊ້ເທົ່າໃດແມ່ນໃຫ້ເບິ່ງໜ້າທີ່ 389 ແລະ 390).
- ແຕະຕ້ອງ ແລະ ເຄື່ອນຍ້າຍຄົນເຈັບໃຫ້ໜ້ອຍທີ່ສຸດ. ຫຼີກເວັ້ນສຽງດັງໆ ແລະ ແສງສະຫວ່າງແຈ້ງ.
- ຖ້າຈຳເປັນຈຶ່ງໃຊ້ສາຍຢາງຕໍ່ກັບຫຼອດສັກຢາ ເພື່ອຈູບເອົາຂີ້ມູກອອກຈາກດັງ ແລະ ລຳຄໍ. ວິທີການນີ້ຈະຊ່ວຍໃຫ້ຄໍໂລ່ງໄດ້.
- ຖ້າເປັນໄປໄດ້ສຳລັບແອນ້ອຍທີ່ຫາກໍ່ເກີດ, ແມ່ນຄວນຂໍຄວາມຊ່ວຍເຫຼືອຈາກພະນັກງານ ສາທາລະນະສຸກ ຫຼື ແພດໃສ່ທໍ່ຈາກດັງໄປຫາທ້ອງເພື່ອໃຫ້ນົມເດັກ(ນົມແມ່). ສິ່ງນີ້ສາມາດຊ່ວຍໃຫ້ແອນ້ອຍມີພູມ ຕ້ານທານ.

**ວິທີປ້ອງກັນເຊື້ອບາດທະຍັກ:**

ເຖິງແມ່ນວ່າຈະມີແພດ ຫຼື ໂຮງໝໍດີປານໃດກໍ່ຕາມຄົນເຈັບຈຳນວນເຄິ່ງໜຶ່ງຂອງຜູ້ທີ່ເປັນໂລກບາດທະຍັກທັງໝົດຕ້ອງຕາຍໄປ. ການປ້ອງກັນໂລກບາດທະຍັກຈະງ່າຍກວ່າການປິ່ນປົວ.

- ການສັກຢາປ້ອງກັນ: ວິທີນີ້ເປັນວິທີປ້ອງກັນທີ່ແນ່ນອນທີ່ສຸດ. ບໍ່ວ່າຈະແມ່ນເດັກນ້ອຍ ແລະ ຜູ້ໃຫຍ່ຢູ່ໃນຄວບຄົວຂອງພວກທ່ານຄວນໄດ້ຮັບການສັກຢາປ້ອງກັນບາດທະຍັກທີ່ໂຮງໝໍ (ເບິ່ງໜ້າ 147). ເພື່ອເປັນການປ້ອງກັນຢ່າງຄົບຖ້ວນຄວນຈະຕ້ອງສັກຢາປ້ອງກັນທຸກໆ 10 ປີ. ການສັກຢາປ້ອງກັນໂລກບາດທະຍັກສຳລັບຜູ້ຍິງທີ່ຖືພາຈະຊ່ວຍປ້ອງກັນບາດທະຍັກຂອງລູກໃນທ້ອງໄດ້ອີກ (ເບິ່ງໜ້າ 250).
- ຖ້າທ່ານມີບາດໂດຍສະເພາະແລ້ວບາດທີ່ເລິກ ຫຼື ບໍ່ສະອາດຈຶ່ງດູແລຮັກສາອານາໄມດັ່ງກ່າວມາແລ້ວໃນໜ້າ 89.
- ຖ້າບາດໃຫຍ່ຫຼາຍເລິກຫຼາຍ ຫຼື ບໍ່ສະອາດຄວນໄປຫາແພດ. ຖ້າທ່ານຍັງບໍ່ທັນໄດ້ສັກຢາປ້ອງກັນບາດທະຍັກເທື່ອ
- ຈຶ່ງກິນຢາເປນີຊີລີນ ແລະ ຈຶ່ງພິຈາລະນາເບິ່ງວ່າສົມຄວນສັກຢາແກ້ພິດບາດທະຍັກປ້ອງກັນບາດທະຍັກອີກຕື່ມບໍ (ເບິ່ງໜ້າ 388).
- ສຳລັບແອນ້ອຍເກີດໃໝ່ຄວາມສະອາດເປັນສິ່ງສຳຄັນທີ່ສຸດທີ່ຈະປ້ອງກັນບາດທະຍັກ. ເຄື່ອງມືໃຊ້ສຳລັບຕັດສາຍບືຄວນໄດ້ຮັບການຂ້າເຊື້ອໂລກເສຍກ່ອນ (ໜ້າ 262). ສາຍບືຄວນຕັດສັ້ນໃຫ້ບໍລິເວນສາຍບື ສະອາດ ແລະ ແຫ້ງ.

ສາຍບືເດັກນ້ອຍຜູ້ນີ້ຕັດສັ້ນ ແຫ້ງດີ ແລະ ເປີດໃຫ້ອາກາດເຂົ້າໄດ້ລາວຈຶ່ງແຂງແຮງ ແລະ ສົມບູນ.



ສາຍບືເດັກນ້ອຍຜູ້ນີ້ຈຶ່ງໄວ້ຍາວປິດໄວ້ແໜ້ນ ແລະ ບໍ່ແຫ້ງ ລາວຈຶ່ງຕາຍດ້ວຍໂລກບາດທະຍັກ.



HLI Seattle
Health Leadership International
Field Draft Copy

## ເຍື່ອຫຸ້ມສະໝອງອັກເສບ

ເປັນໂລກທີ່ອັນຕະລາຍຫຼາຍຕໍ່ສະໝອງ ແລະ ມັກເກີດກັບເດັກນ້ອຍຫຼາຍກວ່າຜູ້ໃຫຍ່. ໂລກເຍື່ອຫຸ້ມສະໝອງອັກເສບແມ່ນອາການແຊກຊ້ອນຂອງໂລກຊະນິດອື່ນໆເຊັ່ນ: ໝາກແດງ, ໝາກເບີດ, ໄອໄກ່ ຫຼື ຫູອັກເສບ. ແອນ້ອຍເກີດຈາກແມ່ທີ່ເປັນວັນນະໂລກບາງເທື່ອຈະເປັນເຍື່ອຫຸ້ມສະໝອງອັກເສບດ້ວຍເຊື້ອວັນນະໂລກໃນໄລຍະອາຍຸ 4-5 ເດືອນທໍາອິດ.

**ອາການ:**

- ເປັນໄຂ້
- ເຈັບຫົວຮຸນແຮງ.
- ຄໍແຂງ ເດັກນ້ອຍມີລັກສະນະອາການເຈັບໜັກ ແລະ ຈະນອນຄໍແງ້ນໄປທາງຫຼັງຄືຮູບນີ້:



- ແອວແຂງຈົນບໍ່ສາມາດເອົາຫົວລົງຮອດຫວ່າງຫົວເຂົ່າໄດ້.
- ແອນ້ອຍອາຍຸໜ້ອຍກວ່າ1ປີ ຂະໝ່ອມຈະເບັ່ງຂຶ້ນ.
- ມັກມີອາການຮາກ.
- ໃນແອນ້ອຍ ແລະ ເດັກນ້ອຍ, ເມື່ອພວກເຂົາເປັນໂລກເຍື້ອຫຸ້ມສະໝອງອັກເສບແມ່ນຍາກທີ່ຈະຮູ້ວ່າພວກເຂົາເປັນໂລກນີ້. ເດັກນ້ອຍອາດຮ້ອງໄຫ້ແບບແປກໆ (ໄຫ້ເພາະເປັນເຍື້ອຫຸ້ມອັກເສບ), ເຖິງແມ່ນວ່າໃນຂະນະທີ່ແມ່ກໍາລັງໃຫ້ນົມລູກ ຫຼື ເດັກນ້ອຍອາດຈະມີອາການທິວນອນຫຼາຍ.
- ບາງເທື່ອມີອາການຊັກ ຫຼື ດິ້ນຜິດປົກກະຕິ.
- ເດັກນ້ອຍເປັນໜັກຂຶ້ນເລື້ອຍໆຈົນສະຫຼົບໄປ.
- ເຍື້ອຫຸ້ມສະໝອງອັກເສບທີ່ເກີດຈາກເຊື້ອວັນນະໂລກຈະເກີດຂຶ້ນຊ້າໆເປັນເວລາຫຼາຍໆມື້ເປັນອາທິດ. ແຕ່ໂລກເຍື້ອຫຸ້ມສະໝອງອັກເສບອື່ນຈະເກີດຂຶ້ນຢ່າງໄວວາ ເປັນເວລາຫຼາຍໆຊົ່ວໂມງ ຫຼື ເປັນມື້.
-

**ການປິ່ນປົວ:**

ໃຫ້ຮີບໄປຫາແພດດ່ວນທີ່ສຸດ-ແຕ່ລະນາທີມີຄ່າຫຼາຍ! ແລະ ຖ້າເປັນໄປໄດ້ຈົ່ງພາຄົນເຈັບໄປໂຮງໝໍ ແຕ່ໃນໄລຍະເວລາທີ່ຍັງບໍ່ທັນມີແພດໝໍຊ່ວຍໃຫ້:

- ສັກຢາແອມປີຊີລິນ 500 ມກ. ທຸກໆ 4 ຊົ່ວໂມງ(ເບິ່ງໜ້າ 352)ຫຼື ຢາເພນີຊີລິນ1.000.000 ໜ່ວຍທຸກໆ 4 ຊົ່ວໂມງ(ເບິ່ງໜ້າ 352). ຖ້າເປັນໄປໄດ້ໃຫ້ໃຊ້ຢາໂຄລແລມເຟນີຄອນ(ເບິ່ງໜ້າ 356).
- ຖ້າໄຂ້ແຮງ(ອຸນນະພູມສູງກວ່າ 40 ອົງສາເຊ)ຈົ່ງລົດອາການໄຂ້ດ້ວຍຜ້າຈູບນໍ້າເຢັນ ແລະ ຢາອາຊຫາມີໂນເປນ ຫຼື ແອດສະໄພລິນ (ເບິ່ງໜ້າ 378 ຫາ 379)
- ຖ້າແມ່ນເປັນວັນນະໂລກ ຫຼື ເຮົາຄິດວ່າເດັກນ້ອຍເປັນໂລກເຍື່ອຫຸ້ມສະໝອງອັກເສບທີ່ເກີດຈາກເຊື້ອວັນນະໂລກ ຄວນສັກຢາສະເຕັບໂຕໄມຊິນ 0,2 ມລ ຕໍ່ນໍ້າໜັກຄົນເຈັບ 5 ກິໂລກຼາມ ແລະ ເອົາໄປຫາແພດໂດຍໄວ. ຖ້າບໍ່ແມ່ນເກີດຈາກເຊື້ອວັນນະໂລກແລ້ວອາດສັກແອມປີຊີລິນ ຫຼື ຢາເປນີຊີລິນກໍໄດ້.
-

**ການປ້ອງກັນ:**

ສໍາລັບການປ້ອງກັນໂລກເຍື່ອຫຸ້ມສະໝອງອັກເສບທີ່ເກີດຈາກເຊື້ອວັນນະໂລກ, ແອນ້ອຍເກີດ ໃໝ່ເກີດຈາກແມ່ເປັນວັນນະໂລກຄວນໃຫ້ສັກຢາກັນວັນນະໂລກ ບີ-ຊີ-ຈີ (B.C.G) ຕັ້ງແຕ່ເກີດໃໝ່ ຂະໜາດສໍາລັບແອນ້ອຍເກີດໃໝ່ແມ່ນ 0,05 ມລ. (ເຄິ່ງໜຶ່ງຂອງຂະໜາດປົກກະຕິ 0,1 ມລ). ສໍາລັບຄໍາແນະນໍາອື່ນທີ່ກ່ຽວກັບການປ້ອງກັນວັນນະໂລກນັ້ນ ໃຫ້ເບິ່ງໜ້າ 179 ຫາໜ້າ 180.

HLI Seattle
Health Leadership International
Field Draft Copy

## ພະຍາດໄຂ້ຍຸງ (ໄຂ້ປາມາລາເລຍ)

ພະຍາດໄຂ້ຍຸງເປັນໂລກຕິດເຊື້ອທີ່ເກີດຂຶ້ນຢູ່ໃນເລືອດ ຊຶ່ງເຮັດໃຫ້ຄົນເຈັບມີອາການໜາວສັ່ນ ແລະ ໄຂ້ຂຶ້ນສູງ. ເຊື້ອໂລກນີ້ແຜ່ຂະຫຍາຍໄດ້ດ້ວຍຍຸງ ຊຶ່ງດູດເອົາເລືອດຂອງຄົນທີ່ເປັນໄຂ້ຍຸງແລ້ວໄປປ່ອຍໃສ່ຄົນອື່ນໆໃນເວລາຍຸງນັ້ນກັດ. ຜູ້ທີ່ເປັນໂລກເອດສສາມາດຕິດເຊື້ອໂລກນີ້ໄດ້ໄວກວ່າຄົນອື່ນໆສອງເທົ່າ.
ອາການຂອງໄຂ້ຍຸງ:

ມີອາການ 3 ຂັ້ນດັ່ງນີ້:

1. ເລີ້ມຕົ້ນດ້ວຍອາການໜາວສັ່ນ ແລະ ເຈັບຫົວຢູ່ປະມານ 15 ນາທີເຖິງໜຶ່ງຊົ່ວໂມງ.

2. ອາການໜາວສັ່ນຈະຕິດຕາມດ້ວຍອາການໄຂ້ຂຶ້ນສູງປະມານ 40 ອົງສາເຊ ຫຼື ກວ່ານັ້ນ. ຄົນເຈັບຈະອ່ອນເພຍຜິວໜັງແດງຮ້ອນໆ ແລະ ບາງເທື່ອກໍ່ຈະປ່ວງໄບ້. ອາການໄຂ້ເປັນຫຼາຍຊົ່ວໂມງ ຫຼື ຫຼາຍມື້.

3. ໃນທີ່ສຸດຄົນເຈັບຈະມີເຫື່ອອອກ ແລະ ອຸນຫະພູມລຸດລົງ. ຫຼັງຈາກນັ້ນຈະຮູ້ສຶກອ່ອນເພຍແຕ່ບໍ່ຄ່ອຍຮູ້ວ່າເຈັບອັນໃດ.



- ຕາມທຳມະດາໄຂ້ຍຸງຈະເຮັດໃຫ້ມີໄຂ້ທຸກໆ 2-3 ມື້ (ຂຶ້ນກັບຊະນິດຂອງເຊື້ອໄຂ້ຍຸງ) ແຕ່ວ່າຈະເລີ້ມຕົ້ນດ້ວຍການໄຂ້ທຸກມື້. ອີກຢ່າງໜຶ່ງລັກສະນະຂອງການໄຂ້ອາດຈະບໍ່ປົກກະຕິ ຫຼື ບໍ່ເປັນຕາມເວລາດັ່ງກ່າວ. ດັ່ງນັ້ນຄົນທີ່ເປັນໄຂ້ໂດຍບໍ່ຮູ້ຈັກສາເຫດ ຄວນຈະກວດເລືອດເພື່ອເບິ່ງວ່າມີເຊື້ອໄຂ້ຍຸງ ຫຼື ບໍ່?
- ພະຍາດໄຂ້ຍຸງຊຳເຮື້ອ (ເປັນມາເຫິງແລ້ວ) ອາດເຮັດໃຫ້ເປັນໂລກປ້າງໃຫຍ່ ແລະ ເປັນເລືອດຈາງໄດ້ (ເບິ່ງໜ້າ 124). ຜູ້ທີ່ເປັນໂລກເອດສ (ໜ້າ 399) ພວກເຂົາອາດຮູ້ສຶກບໍ່ສະບາຍໄວກ່ວາຄົນທີ່ເປັນໂລກອື່ນ.
- ໃນເດັກນ້ອຍ, ໂລກເລືອດຈາງ ແລະ ໂລກຕົວຊີດເຫຼືອງແມ່ນອາການເບື້ອງຕົ້ນທີ່ສະແດງອອກພາຍໃນໜຶ່ງຫາສອງມື້. ພະຍາດໄຂ້ຍຸງຈະມີຜົນກະທົບຕໍ່ສະໝອງຂອງເດັກ ແລະ ບາງຄັ້ງອາດຈະມີອາການຊັກໃນເວລາໝົດສະຕິ. ອີກຢ່າງໜຶ່ງຝາມືຂອງເດັກຈະມີສີຟ້າປົນສີເທົາ,ແລະ ການຫາຍໃຈແມ່ນຫາຍໃຈໄວ ແລະ ເລິກ. (ຂໍ້ສັງເກດ: ເດັກນ້ອຍທີ່ບໍ່ໄດ້ກິນນົມແມ່ແມ່ນມີໂອກາດເປັນພະຍາດໄຂ້ຍຸງຫຼາຍກວ່າເດັກທີ່ກິນນົມແມ່.

**ການວິໄຈ ແລະ ການປິ່ນປົວ:**

- ຖ້າທ່ານເປັນໄຂ້ຊ້ຳໆກັນຫຼາຍມື້ ຫຼື ສົງໄສວ່າເປັນໄຂ້ຍຸງຈົ່ງໄປຫາແພດເພື່ອກວດເລືອດ. ໂດຍສະເພະແມ່ນເຂດທີ່ມີພະຍາດໄຂ້ຍຸງຊະນິດທີ່ເປັນອັນຕະລາຍຮ້າຍແຮງເຊັ່ນ: ຟອນຊີປາຣ້ຳ (Falciparum) ແມ່ນໃຫ້ໄປພົບແພດໂດຍດ່ວນ.
- ໃນເຂດທີ່ພະຍາດໄຂ້ຍຸງມັກເກີດຂຶ້ນເລື້ອຍໆການຮັກສາອາການເປັນໄຂ້ຕ່າງໆໂດຍບໍ່ຮູ້ສາເຫດແມ່ນຄືກັບ ການຮັກສາໄຂ້ຍຸງ. ໃຫ້ກິນຢາແກ້ໄຂ້ຍຸງທີ່ສາມາດໃຊ້ໄດ້ຜົນດີໃນຄົງເຂດທີ່ທ່ານອາໃສຢູ່. (ເບິ່ງຂໍ້ມູນກ່ຽວກັບປະລິມານຢາວ່າຕ້ອງໃຊ້ເທົ່າໃດໃນການຮັກສາໄຂ້ຍຸງໃນໜ້າທີ 365 ຫາ 368).
- ຖ້າທ່ານຮູ້ສຶກວ່າກິນຢາແລ້ວມີອາການດີກວ່າເກົ່າ, ແຕ່ຫຼາຍມື້ຕໍ່ມາຫຼັງຈາກນັ້ນກັບຄືນໄຂ້ອີກໃຫ້ກິນຢາຊະນິດອື່ນ. ສິ່ງທີ່ສຳຄັນແມ່ນໃຫ້ຂໍຄຳແນະນຳຈາກແພດທີ່ຢູ່ໃກ້ຄຽງ.
- ຖ້າຄົນເຈັບທີ່ສົງໄສວ່າຈະເປັນໄຂ້ຍຸງເລີ້ມມີອາການຊັກ ໝົດສະຕິ ຫຼື ມີອາການແນວອື່ນຂອງໂລກເຍື້ອຫຸ້ມ ສະໝອງອັກເສບ (ໜ້າ 185) ເຂົາອາດເປັນໄຂ້ຍຸງຂຶ້ນສະໝອງ. ຖ້າເປັນໄປໄດ້ຄວນສັກຢາແກ້ໄຂ້ຍຸງໂລດ (ເບິ່ງໜ້າ 366).

HLI Seattle
Health Leadership International
Field Draft Copy

## ວິທີຫຼີກເວັ້ນພະຍາດໄຂ້ຍຸງ:

ພະຍາດໄຂ້ຍຸງແມ່ນບັນຫາທີ່ເກີດຂຶ້ນໃນບ່ອນທີ່ມີອາກາດຮ້ອນ. ຖ້າໝົດທຸກຄົນຮ່ວມມືກັນຄວບຄຸມໄຂ້ຍຸງ ມັນກໍ່ຈະບໍ່ເກີດຂຶ້ນໄດ້. ວິທີການຄວບຄຸມໄຂ້ຍຸງເຫຼົ່ານີ້ແມ່ນຄວນຖືກໃຊ້ທັງໝົດພ້ອມກັນ.

1. ປ້ອງກັນບໍ່ໃຫ້ຍຸງກັດ. ນອນບ່ອນບໍ່ມີຍຸງ ຫຼື ນອນກາງມຸ້ງ.ເວລາເດັກນ້ອຍນອນຕ້ອງກາງມຸ້ງ.



2. ຮ່ວມມືກັບພະນັກງານໜ່ວຍປ້ອງກັນໄຂ້ຍຸງທີ່ເຂົ້າມາໃນບ້ານ ເຮົາບອກເຂົາວ່າມີໃຜແດ່ຢູ່ໃນຄອບຄົວເປັນໄຂ້ ແລ້ວຍອມໃຫ້ເອົາເລືອດຂອງຜູ້ເປັນໄຂ້ໄປກວດ.

3. ຖ້າທ່ານສົງໄສວ່າຈະເປັນໄຂ້ຍຸງຄວນປິ່ນປົວໂດຍໄວ. ຫຼັງຈາກທ່ານໄດ້ປິ່ນປົວແລ້ວຍຸງທີ່ມາກັດທ່ານກໍ່ຈະບໍ່ນຳເຊື້ອໄຂ້ຍຸງໄປສູ່ຜູ້ອື່ນໄດ້.



4. ຂ້າຍຸງ ແລະ ໜອນນ້ຳ (ລູກຍຸງ) ໃຫ້ໝົດ. ຍຸງມັກໄຂ່ໃສ່ບ່ອນນ້ຳບໍ່ໄຫຼ. ຈົ່ງກຳຈັດໜອງ, ຂຸມ, ກະປ໋ອງ ຫຼື ໝໍ້ແຕກທີ່ມີນ້ຳຂັງຢູ່.



5. ພະຍາດໄຂ້ຍຸງສາມາດປ້ອງກັນໄດ້ ຫຼື ມັນສາມາດຫຼຸດຜ່ອນລົງໄດ້ໂດຍການໃຊ້ຢາຕ້ານໄຂ້ຍຸງຕາມ
ຕາຕະລາງ. ເບິ່ງໜ້າ 365 ຫາ 368.

## ໄຂ້ເລືອດອອກ

ບາງເທື່ອເຮົາມັກຫຼົງພະຍາດຊະນິດນີ້ກັບພະຍາດໄຂ້ຍຸງ. ຍຸງເປັນພາຫະນຳເຊື້ອໄວລັດທີ່ເຮັດໃຫ້ພະຍາດໄຂ້ເລືອດອອກແຜ່ຂະຫຍາຍຕົວ. ໃນໄລຍະຫຼາຍປີໃນມໍ່ໆນີ້ພະຍາດໄຂ້ເລືອດອອກມີການແຜ່ລາມໃນຫຼາຍປະເທດ. ມັນໄດ້ກາຍເປັນໂລກລະບາດທີ່ມັກເກີດຂຶ້ນໃນລະດູຝົນທີ່ມີອາກາດຮ້ອນ. ຄົນເຈັບທີ່ເປັນພະຍາດໄຂ້ເລືອດອອກອາດຈະເປັນຫຼາຍກວ່າຄັ້ງໜຶ່ງ ແລະ ການເປັນຄັ້ງຕໍ່ມາແມ່ນຮ້າຍແຮງກວ່າຄັ້ງທຳອິດຫຼາຍ. ເພື່ອເປັນການປ້ອງກັນ ແລະ ຄວບຄຸມຈຳນວນຂອງຍຸງ ແລະ ປ້ອງກັນບໍ່ໃຫ້ຍຸງກັດດັ່ງທີ່ໄດ້ກ່າວມາແລ້ວໃນຂ້າງເທິງນັ້ນ.

ອາການ:

- ອາການໄຂ້ສູງກະທັນຫັນມີອາການສັ່ນພ້ອມ.
- ເຈັບຕາມຕົນໂຕ,ເຈັບຫົວ, ເຈັບຄໍ.
- ຄົນເຈັບຮູ້ສຶກວ່າຕົນເອງປ່ວຍຫຼາຍ, ອ່ອນເພຍ, ມີອາການເປັນທຸກ.
- ຫຼັງຈາກນັ້ນ 3 ຫາ 4 ວັນ ຄົນເຈັບແມ່ນມີອາການດີຂຶ້ນປະມານ 2 ຫາ 3 ຊົ່ວໂມງຫາ 2 ມື້.
- ຕໍ່ຈາກນັ້ນອາການເຈັບຈະກັບຄືນມາອີກພາຍໃນ 1 ຫາ 2 ມື້, ສ່ວນຫຼາຍແລ້ວໃນໄລຍະນີ້ແມ່ນຈະມີຜື່ນແດງຂຶ້ນຕາມມື ແລະ ຕີນ.
- ຜື່ນແດງຈະແຜ່ລາມໄປຫາແຂນ, ຂາ, ແລະ ທົ່ວຕົນຕົວ (ຍົກເວັ້ນໃບໜ້າ).
- ໄຂ້ເລືອດອອກຂັ້ນຮ້າຍແຮງແມ່ນສາມາດເຮັດໃຫ້ເລືອດອອກຕາມຜິວໜັງໄດ້ (ເປັນຈຸດດຳ) ຫຼື ເປັນອັນຕະລາຍຖ້າມີເລືອດອອກຢູ່ພາຍໃນຮ່າງກາຍ.

**ການຮັກສາ:**

- ບໍ່ມີຢາຊະນິດໃດທີ່ສາມາດໃຊ້ຮັກສາໂລກໄຂ້ເລືອດອອກໄດ້, ອາການເຈັບປ່ວຍຈະເຊົາເອງພາຍໃນ 2 ຫາ 3 ມື້.
- ຄວນພັກຜ່ອນ, ດື່ມນ້ຳຫຼາຍໆ, ກິນຢາແກ້ໄຂ້ (ແຕ່ບໍ່ໃຫ້ກິນຢາແອດສະໄປລິນ) ເພື່ອຮັກສາອາການເຈັບໄຂ້.
- ໃນກໍລະນີເລືອດອອກຢ່າງຮ້າຍແຮງ, ຖ້າຈຳເປັນໃຫ້ຮັກສາອາການຊ໊ອກ (ເບິ່ງໜ້າ 77).

HLI Seattle
Health Leadership International
Field Draft Copy

## ພະຍາດຕິດເຊື້ອແບັກທີເລຍຊະນິດໜຶ່ງມີອາການໄຂ້ສູງ

ພະຍາດຊະນິດນີ້ເກີດມາຈາກການດື່ມນໍ້ານົມງົວສົດ ແລະ ນົມແບ້ສົດທີ່ມີເຊື້ອພະຍາດປົນຢູ່. ອີກຢ່າງໜຶ່ງມັນອາດຈະເຂົ້າສູ່ຮ່າງກາຍຂອງຄົນເຮົາຜ່ານທາງຮອຍແຕກ ຫຼື ບາດແຜເມື່ອຄົນເຮົາເຮັດວຽກຢູ່ກັບສັດລ້ຽງ, ແບ້, ຫຼື ໝູ ທີ່ເຈັບປ່ວຍ. ການຕິດເຊື້ອອີກຢ່າງໜຶ່ງແມ່ນຜ່ານທາງຫາຍໃຈເອົາເຊື້ອພະຍາດເຂົ້າໄປໃນປອດ.



ການປ້ອງກັນພະຍາດຕິດເຊື້ອແບັກທີເລຍຊະນິດໜຶ່ງມີອາການໄຂ້ສູງ: ບໍ່ໃຫ້ດື່ມນົມທີ່ບໍ່ທັນຕົ້ມເດັດຂາດ.

**ອາການ**:

- ພະຍາດຕິດເຊື້ອແບັດທີເລຍຊະນິດໜຶ່ງມີອາການໄຂ້ສູງແມ່ນເລີ່ມຈາກການມີໄຂ້ ແລະ ມີອາການໜາວສັ່ນ, ແຕ່ວ່າໂດຍປົກກະຕິແລ້ວແມ່ນເລີ່ມຈາກມີອາການເມື່ອຍ, ອ່ອນເພຍ, ບໍ່ຢາກກິນອາຫານ, ເຈັບຫົວ, ເຈັບທ້ອງ ແລະ ເຈັບຕາມຂໍ່.
- ອາການໄຂ້ອາດຈະບໍ່ຮຸນແຮງ ຫຼື ອາດຈະຮຸນແຮງ. ຕາມປົກກະຕິແລ້ວອາການເຫຼົ່ານີ້ເລີ່ມຈາກເປັນໄຂ້ໃນຕອນສວາຍ ແລະ ລົງທ້າຍດ້ວຍອາການມີເຫື່ອອອກໃນຕອນເຊົ້າ. ໃນພະຍາດຕິດເຊື້ອແບກທີເລຍຊະນິດໜຶ່ງມີອາການໄຂ້ສູງແບບຊໍາເຮື້ອອາການໄຂ້ອາດຈະເຊົາເປັນເວລາຫຼາຍໆມື້ ແລະ ກັບມາເປັນຄືນ. ຖ້າບໍ່ໄດ້ຮັບການຮັກສາໂລກຕິດເຊື້ອແບກທີເລຍຊະນິດໜຶ່ງມີອາການໄຂ້ສູງຈະເປັນຢູ່ເປັນຫຼາຍປີ.
- ນອກຈາກນັ້ນມັນຍັງມີອາການໃຄ່ບວມຂອງຕ່ອມນໍ້າເຫຼືອງຢູ່ຕາມສາຍຄໍ, ຂີ້ແຫ້, ແອບຂາ (ໜ້າ 88).

**ການປິ່ນປົວ:**

- ຖ້າທ່ານສົງໃສວ່າເປັນພະຍາດຕິດເຊື້ອແບກທີເລຍຊະນິດໜຶ່ງມີອາການໄຂ້ສູງຄວນໄປພົບແພດ ເພາະວ່າມັນອາດຈະໄປຫຼົງກັບພະຍາດຊະນິດອື່ນ ແລະ ເຮັດໃຫ້ເຮົາເສຍທັງເງິນ ແລະ ເວລາກັບການປິ່ນປົວບໍ່ຖືກພະຍາດ.
- ການຮັກສາໂດຍໃຊ້ຢາເຕຕຼາຊີລິນຜູ້ໃຫ່ຍ 250 ມກ. ແບບແຄບຊູນແມ່ນກິນ 4 ຄັ້ງຕໍ່ມື້ເປັນເວລາ 3 ອາທິດ. ສໍາລັບຂໍ້ຄວນລະວັງແມ່ນໃຫ້ເບິ່ງໜ້າ 356. ຫຼື ວ່າໃຊ້ຢາໂຄຕຼີໂມຊາໂຊນ. (ສໍາລັບປະລິມານການໃຊ້ ແລະ ຂໍ້ຄວາມລະວັງແມ່ນໃຫ້ເບິ່ງໜ້າ 357.)

**ການປ້ອງກັນ:**

- ພຽງແຕ່ດື່ມນົມທີ່ຕົ້ມແລ້ວ ຫຼື ໄດ້ຜ່ານການຂ້າເຊື້ອ. ໃນບໍລິເວນບ່ອນທີ່ພົບບັນຫາຂອງພະຍາດນີ້, ມັນບໍ່ປອດໄພທີ່ຈະກິນເນີຍທີ່ເຮັດຈາກນົມສົດ.
- ຄວນລະມັດລະວັງເມື່ອຕ້ອງໄດ້ສໍາຜັດກັບສັດລ້ຽງເຊັ່ນ: ງົວ, ຄວາຍ, ແບ້, ແລະ ໝູ ໂດຍສະເພາະເວລາທີ່ເຈົ້າມີຮອຍຂູດ ຫຼື ບາດແຜ.
- ຕ້ອງມີການຕິດຕໍ່ພົວພັນຂໍຄວາມຊ່ວຍເຫຼືອຈາກຜູ້ກວດກາດ້ານປະສຸສັດເພື່ອກວດສອບເບິ່ງວ່າສັດຂອງເຈົ້າເອງມີສຸຂະພາບດີ.

## ໄຂ້ທໍລະພິດ

ໄຂ້ທໍລະພິດເປັນໂລກຕິດເຊື້ອທີ່ເກີດຂຶ້ນໃນລໍາໄສ້ ຊຶ່ງມີຜົນກະທົບໄປທົ່ວຮ່າງກາຍ. ໂລກນີ້ແຜ່ເຊື້ອຈາກອາຈົມໄປເຖິງປາກເວລາກິນອາຫານ ຫຼື ນໍ້າທີ່ບໍ່ສະອາດ ແລະ ເປັນໂລກລະບາດ (ຫຼາຍຄົນໄຂ້ພ້ອມກັນບາດດຽວ).
ການຕິດເຊື້ອຕ່າງກັນບາງຢ່າງເອີ້ນວ່າ“ໄຂ້”(ເບິ່ງໜ້າ 26) ແລະ ເປັນໄຂ້ທີ່ອັນຕະລາຍທີ່ສຸດຊະນິດໜຶ່ງ.

HLI Seattle
Health Leadership International
Field Draft Copy

**ອາການຂອງໄຂ້ທໍລະພິດ:**

**ອາທິດທີໜຶ່ງ:**

- ເລີ່ມຕົ້ນເປັນໄຂ້ຄືກັບເປັນໄຂ້ຫວັດ ຫຼື ໄຂ້ຫວັດໃຫຍ່.
- ເຈັບຫົວ, ເຈັບຄໍ ແລະ ມີໄອແຫ້ງ.
- ແຕ່ລະມື້ອາການໄຂ້ຂຶ້ນໆລົງໆ, ບາງຄັ້ງແມ່ນມີໄຂ້ຮ້ອນເພີ່ມຂຶ້ນຈົນຮອດ 40 ອົງສາເຊ ຫຼື ຫຼາຍກວ່ານັ້ນ.
- ກໍາມະຈອນເຕັ້ນຊ້າໆ ຄວນແທກອຸນຫະພູມ ແລະ ຈັບກໍາມະຈອນທຸກໆ 30 ນາທີ. ຖ້າກໍາມະຈອນຊ້າລົງ ເມື່ອໄຂ້ຂຶ້ນສູງສະແດງວ່າຜູ້ນັ້ນເປັນໄຂ້ທໍລະພິດ(ເບິ່ງໜ້າ 19)
- ບາງເທື່ອອາດມີຮາກ, ຖອກທ້ອງ ຫຼື ທ້ອງຜູກ.




**ອາທິດທີສອງ:**

- ໄຂ້ສູງ, ກໍາມະຈອນເຕັ້ນຊ້າຜິດປົກກະຕິ.
- ຕາມຜິວໜັງຈະສັງເກດເຫັນຈຸດສີບົວ.
- ສັ່ນ (ຍ້ອນຄວາມອ່ອນເພຍ).
- ເພີ້ (ລະເມີ).
- ອ່ອນເພຍ, ມີນໍ້າໜັກລົດລົງ ແລະ ມີອາການຂາດນໍ້າໃນຮ່າງກາຍ.

**ອາທິດທີສາມ**

- ຖ້າບໍ່ມີອາການອື່ນແຊກຊ້ອນ, ໄຂ້ ແລະ ອາການອື່ນໆຈະຄ່ອຍດີໄປ.

**ການປິ່ນປົວ:**

- ຈົ່ງໄປຫາແພດ.
- ຢູ່ໃນເຂດເຊິ່ງໄຂ້ທໍລະພິດດື້ຢາຄໍລແລມເຟນີໂກນ ແລະ ຢາແອມພີຊີລິນ, ໃຫ້ຄົນເຈັບກິນຢາໂຄຫຼີໂມຊາໂຊນ (ເບິ່ງໜ້າ 358) ຢ່າງນ້ອຍ 2 ອາທິດ.
- ຫຼື ສໍາລັບຜູ້ໃຫຍ່ກິນຄໍລແລມເຟນີໂກນ (ເບິ່ງໜ້າ 357): 2 ກ້ອນໆລະ 250ມກ. ຊະນິດແຄັບຊູນມື້ໜຶ່ງ 4 ເທື່ອຢ່າງໜ້ອຍ 2 ອາທິດ. ຖ້າບໍ່ມີຄໍລແລມເຟນີໂກນ, ໃຫ້ກິນແອມປີຊີລິນ (ເບິ່ງໜ້າ 352), ຫຼື ເຕຕຼາຊີລິນ (ເບິ່ງໜ້າ 355).
- ເອົາຜ້າຈຸບນໍ້າເຢັນເຊັດຕາມຄີງເພື່ອໃຫ້ອາການໄຂ້ລົດລົງ (ເບິ່ງໜ້າ 76).
- ໃຫ້ກິນນໍ້າຫຼາຍໆ: ນໍ້າແກງ ນໍ້າໝາກໄມ້ ແລະ ນໍ້າດື່ມແກ້ການຂາດນໍ້າໃນຮ່າງກາຍເພື່ອປ້ອງກັນການຂາດນໍ້າ (ເບິ່ງໜ້າ 152).
- ໃຫ້ກິນອາຫານຊະນິດເປັນຂອງແຫຼວທີ່ມີປະໂຫຍດຖ້າຈໍາເປັນ.
- ໃຫ້ຄົນເຈັບພັກຜ່ອນຈົນກວ່າໄຂ້ດີ.
- ຖ້າຄົນເຈັບຖ່າຍອອກເລືອດ ຫຼື ມີອາການຂອງເຍື່ອຫຸ້ມທ້ອງອັກເສບ (ໜ້າ 94) ຫຼື ອັກເສບປອດ (ໜ້າ 171) ໃຫ້ຮີບເອົາໄປໂຮງໝໍໂດຍໄວ.

**ການປ້ອງກັນໄຂ້ທໍລະພິດ:**

- ເພື່ອປ້ອງກັນໄຂ້ທໍລະພິດຕ້ອງພະຍາຍາມຫຼີກເວັ້ນບໍ່ໃຫ້ນໍ້າ ແລະອາຫານຕິດເຊື້ອໂລກຈາກອາຈົມຂອງຄົນ ຈົ່ງປະຕິບັດຕາມຄໍາແນະນໍາອານາໄມ 3 ສະອາດໃນບົດທີ 12. ຈົ່ງຖ່າຍໃສ່ວິດ ແລະ ເຮັດວິດຢູ່ຫ່າງໄກເຮືອນ ແລະ ບ່ອນຕັກນໍ້າມາໃຊ້.
- ກໍລະນີໄຂ້ທໍລະພິດເກີດຂຶ້ນຫຼັງຈາກນໍ້າຖ້ວມ ຫຼື ເຫດຮ້າຍອື່ນໆ ໃນໄລຍະນີ້ຈໍາເປັນຕ້ອງທໍາຄວາມສະອາດເລື້ອຍໆ ດື່ມນໍ້າສະອາດ ຖ້າມີໄຂ້ທໍລະພິດເກີດຂຶ້ນໃນໝູ່ບ້ານຂອງທ່ານ ຄວນດື່ມແຕ່ນໍ້າຕົ້ມ ແລະ ຊອກຫາສາເຫດທີ່ເຮັດໃຫ້ນໍ້າ ແລະ ອາຫານບໍ່ສະອາດ.
- (ສືບຕໍ່ໃນໜ້າຕໍ່ໄປ)

HLI Seattle
Health Leadership International
Field Draft Copy

# ການປ້ອງກັນໄຂ້ທໍລະພິດ: (ສືບຕໍ່)

- ເພື່ອຫຼີກເວັ້ນການຕິດແປດໄຂ້ທໍລະພິດ ຄົນໄຂ້ຄວນນອນໃນຫ້ອງຕ່າງຫາກ ບໍ່ໃຫ້ໃຊ້ຖ້ວຍຈານ ແລະ ກິນດື່ມຮ່ວມກັນກັບຄົນອື່ນ. ອາຈົມຂອງຄົນເຈັບຄວນເຜົາ ຫຼື ຝັງໃນຂຸມເລິກໆ. ຄົນເຝົ້າເບິ່ງແຍງຕ້ອງລ້າງມືໃຫ້ສະອາດທັນທີພາຍຫຼັງທີ່ອອກຈາກຫ້ອງຂອງຄົນເຈັບ.
- ຫຼັງຈາກໄຂ້ທໍລະພິດດີແລ້ວຄົນເຈັບບາງຄົນຍັງສາມາດແຜ່ເຊື້ອໄປຫາຜູ້ອື່ນໄດ້ ສະນັ້ນຜູ້ທີ່ເປັນໄຂ້ທໍລະພິດຫາກໍ່ດີໃໝ່ໆ ຄວນຮັກສາຄວາມສະອາດເປັນພິເສດ ແລະ ບໍ່ໃຫ້ເຮັດວຽກຢູ່ໃນຫ້ອງອາຫານ ຫຼື ປຸງແຕ່ງອາຫານ. ບາງເທື່ອການໃຊ້ຢາແອມພີຊີລິນກໍອາດພໍຊ່ວຍໃນການປິ່ນປົວຄົນມີເຊື້ອໄຂ້ທໍລະພິດໄດ້.

# ໄທຟັດ (ໄຂ້ທໍລະພິດທຽມ)

ໄທຟັດແມ່ນໂລກຄ້າຍຄືກັນກັບໄຂ້ທໍລະພິດແຕ່ບໍ່ແມ່ນອັນດຽວກັນ. ການແຜ່ເຊື້ອເກີດຈາກສັດດັ່ງລຸ່ມນີ້ກັດ:

ເຫົາ



ເຫັບ ແລະ ໄຮ່



ໝັດ



## ອາການ:

- ໄທຟັດເລີ່ມດ້ວຍອາການຄືກັບການເປັນຫວັດຢ່າງຮ້າຍແຮງ. ຫຼັງຈາກນັ້ນໜຶ່ງອາທິດກວ່າຈະເລີ່ມໄຂ້ສັ່ນ, ເຈັບຫົວ, ປວດກ້າມຊີ້ນ ແລະ ໜ້າເອິກ.
- ຫຼັງຈາກໄຂ້ 2-3 ມື້ແລ້ວຈະອອກຕຸ່ມໆ ນີ້ເປັນຕຸ່ມສະເພາະຂອງໂລກໄທຟັດ ທຳອິດຕຸ່ມຈະອອກຕາມຂີ້ແຮ້ ແລະ ຕາມຮ່າງກາຍ, ຕໍ່ໄປຈະອອກຕາມແຂນ ແລະ ຂາ (ແຕ່ບໍ່ອອກຢູ່ໜ້າຝາມື ແລະ ຝາຕີນ). ຕຸ່ມດັ່ງກ່າວຄ້າຍຄືກັນກັບເມັດນ້ອຍໆຫຼາຍໆເມັດ.
- ມີອາການໄຂ້ປະມານ 2 ອາທິດກວ່າ. ຕາມທຳມະດາໂລກນີ້ບໍ່ຮ້າຍແຮງສຳລັບເດັກນ້ອຍແຕ່ວ່າຮ້າຍແຮງທີ່ສຸດສຳລັບຜູ້ເຖົ້າ. ໂດຍສະເພາະການລະບາດຂອງໂລກໄທຟັດນັ້ນເປັນອັນຕະລາຍທີ່ສຸດ.
- ຖ້າໂລກໄທຟັດຖືກແຜ່ເຊື້ອຈາກເຫັບມັກຈະເປັນບາດໃຫຍ່ເຈັບປວດຫຼາຍທີ່ບ່ອນຖືກກັດ ແລະ ຕ່ອມນ້ຳຢາງເຫຼືອງໃກ້ຄຽງຈະໃຄ່ ແລະ ປວດ.

## ການປິ່ນປົວໂລກໄທຟັດ:

- ຖ້າທ່ານຄິດວ່າຜູ້ໃດຜູ້ໜຶ່ງເປັນໂລກໄທຟັດຄວນໄປຫາແພດເພາະການກວດກາເປັນພິເສດແມ່ນຈຳເປັນ.
- ໃຫ້ກິນຢາເຕຕຼາຊີລິນ: ສຳລັບຜູ້ໃຫຍ່ 2 ກ້ອນຊະນິດແຄບຊູນກ້ອນລະ 250ມກ. 4 ເທື່ອຕໍ່ມື້ໃນໄລຍະ 4 ຫາ 10 ມື້ (ເບິ່ງໜ້າ 355). ໃຊ້ຢາຄໍລແລມເຟນິຄອນກໍໄດ້ ແຕ່ບໍ່ມີຄວາມປອດໄພເທົ່າກັບເຕຕຼາໄຊຄຼີນ (ເບິ່ງໜ້າ 356).

## ການປ້ອງກັນໂລກໄທຟັດ:

- ຮັກສາຄວາມສະອາດບຸກຄົນ ຂ້າເຫົາໃຫ້ຄົນໃນເຮືອນເປັນປະຈຳ.
- ກຳຈັດເຫັບ ແລະ ໄຮ່ຈາກໝາ ແລະ ບໍ່ໃຫ້ໝາເຂົ້າໃນເຮືອນ.
- ຂ້າໜູ. ໃຊ້ແມວ ຫຼື ເຄື່ອງຈັບໜູ (ເພາະມັນບໍ່ເປັນອັນຕະລາຍຕໍ່ສັດອື່ນໆ ແລະ ເດັກນ້ອຍອີກດ້ວຍ).
- ຂ້າໝັດທີ່ມີຢູ່ໃນໜູ. ບໍ່ໃຫ້ຈັບໜູທີ່ຕາຍແລ້ວເພາະວ່າໝັດຢູ່ນຳໜູອາດຈະເຕັ້ນໃສ່ເຈົ້າກໍ່ໄດ້. ຄວນຈະຂຸດຂຸມຝັງ ຫຼື ຈູດກໍ່ໄດ້ເພາະວ່າມັນຈະສາມາດເຮັດໃຫ້ໝັດຕາຍໄດ້. ໃຊ້ຢາຂ້າແມງໄມ້ໃສ່ໃນຮູຮັງຂອງໜູ.



HLI Seattle
Health Leadership International
Field Draft Copy

# ໂລກຂີ້ທູດ

ໂລກຂີ້ທູດເປັນໂລກຊຳເຮື້ອຊະນິດໜຶ່ງທີ່ຂະຫຍາຍຕົວຊ້າໆ ແລະ ກິນເວລາຫຼາຍປີ. ມັນສາມາດຕິດແປດຈາກຜູ້ທີ່ເປັນໂລກນີ້ແຕ່ບໍ່ໄດ້ຮັບການຮັກສາໃສ່ແຕ່ຜູ້ທີ່ມີຄວາມຕ້ານທານຕໍ່າກໍ່ຈະຕິດເຊື້ອໂລກນີ້ໄດ້ງ່າຍ. ຢູ່ໃນບໍລິເວນທີ່ມີຄົນເປັນຂີ້ທູດຫຼາຍໃຫ້ເອົາເດັກນ້ອຍໄປກວດທຸກໆ 6 ເດືອນຫາ 12 ເດືອນ. ໂດຍສະເພາະແມ່ນເດັກນ້ອຍທີ່ຢູ່ກັບຜູ້ທີ່ເປັນຂີ້ທູດ.

**ອາການ**: ໂລກຂີ້ທູດເປັນສາເຫດຂອງໂລກຕ່າງໆເຊັ່ນ: ບັນຫາກ່ຽວກັບຜິວໜັງຊະນິດຕ່າງໆ, ການສູນເສຍຄວາມຮູ້ສຶກ, ແລະ ເປັນອຳມະພາດຕາມຕີນ ແລະ ມື.

ອາການທີ່ສະແດງອອກທຳອິດຂອງໂລກຂີ້ທູດແມ່ນມັນຈະເກີດມີຜື່ນເກີດຢູ່ເທິງຜິວໜັງແຕ່ບໍ່ຮູ້ສຶກຄັນ ຫຼື ເຈັບແຕ່ຢ່າງໃດເລີຍ. ທຳອິດຄວາມຮູ້ສຶກຢູ່ບ່ອນທີ່ເປັນຜື່ນແມ່ນທຳມະດາ. ຄວນສືບຕໍ່ສັງເກດເບິ່ງເພາະວ່າຖ້າຄວາມຮູ້ສຶກຢູ່ບ່ອນເປັນຜື່ນລຸດລົງ ຫຼື ບໍ່ມີຄວາມຮູ້ສຶກເລີຍ (ເບິ່ງໜ້າ 38) ແມ່ນພວກເຈົ້າອາດຈະເປັນຂີ້ທູດ.

ກວດສອບເບິ່ງວ່າມີຜື່ນຂຶ້ນຕາມຜິວໜັງບໍໂດຍສະເພາະແມ່ນຢູ່ຕາມໜ້າ, ແຂນ, ຫຼັງ, ກົ້ນ, ແລະ ຂາ.







ຜື່ນຈະມີສີທີ່ຄ້ອນຂ້າງແຕກຕ່າງກັບຜິວໜັງທຳມະດາ, ແມ່ນມັນບໍ່ມີສີຂາວທັງໝົດ ຫຼື ເປັນເກັດ.

ອາການຂອງຜິວໜັງແຕກຕ່າງກັນຫຼາຍຄືບາງບ່ອນເປັນຈຸດດ່າງ ຫຼື ເປັນວົງໃຫຍ່ຄ້າຍຄືຂີ້ກາກທີ່ບໍ່ມີຄວາມຮູ້ສຶກບໍລິເວນໃນເສັ້ນປະສາດໃຄ່ມີລັກສະນະເໝືອນເຊືອກ ຫຼື ເປັນກ້ອນຢູ່ໃຕ້ໜັງ ແລະ ເປັນບາດຊຳເຮື້ອໃຫຍ່ ຊຶ່ງບໍ່ຮູ້ຈັກເຈັບ ຫຼື ຄັນ.

ອາການຂອງຜິວໜັງແຕກຕ່າງກັນຫຼາຍຄືບາງບ່ອນເປັນຈຸດດ່າງ ຫຼື ເປັນວົງໃຫຍ່ຄ້າຍຄືຂີ້ກາກທີ່ບໍ່ມີຄວາມຮູ້ສຶກ



ບໍລິເວນໃນເສັ້ນປະສາດໃຄ່ມີລັກສະນະເໝືອນເຊືອກ ຫຼື ເປັນກ້ອນຢູ່ໃຕ້ໜັງ ແລະ ເປັນບາດຊຳເຮື້ອໃຫຍ່ ຊຶ່ງບໍ່ຮູ້ຈັກເຈັບ ຫຼື ຄັນ.









ອາການຂອງໂລກນີ້ແຕ່ລະຄົນແຕກຕ່າງກັນມັນຂຶ້ນກັບຄວາມຕ້ານທານຂອງຮ່າງກາຍ. ຊອກຫາອາການຕໍ່ໄປນີ້:



ອາການທີ່ເປັນຮ້າຍແຮງປະກອບມີດັ່ງລຸ່ມນີ້:

















- ຮູ້ສຶກປວດແສບ, ສູນເສຍຄວາມຮູ້ສຶກຢູ່ມື ຫຼື ຕີນ.
- ຮູ້ສຶກອ່ອນເພຍເລັກໜ້ອຍ ຫຼື ຕີນ, ມືເປັນອຳມະພາດ.
- ມີອາການບວມຂອງເສັ້ນປະສາດທີ່ເຮັດໃຫ້ເປັນເສັ້ນເລືອດຂອດຢູ່ກ້ອງຜິວໜັງ. ອາດຈະມີອາການເຈັບປວດເສັ້ນປະສາດເມື່ອເຮົາເອົາມືເນັ້ນໃສ່.

Advanced sign may include:

HLI Seattle
Health Leadership Information
Field Draft Copy

## ວິທີປິ່ນປົວຂີ້ທູດ:

ຕາມທຳມະດາຂີ້ທູດເປັນໂລກທີ່ປິ່ນປົວໃຫ້ດີໄດ້ ແຕ່ຕ້ອງກິນຢາເປັນປີໆ, ຢາທີ່ດີທີ່ສຸດຄືຢາດັບໂຊນ (Dapsone). ຖ້າເປັນໄປໄດ້ໃຫ້ໃຊ້ຢາ 2 ຊະນິດຮ່ວມກັນແມ່ນຢາຣີແຟມພິນ (Rifampin) ແລະ ຢາໂຂຟາຊີມິນ (Clofazimine) (ເບິ່ງໜ້າ 364 ຫາ 365). ຖ້າມີ "ປະຕິກິລິຍາຂອງໂລກຂີ້ທູດ" (ເປັນໄຂ້, ອອກຕຸ່ມ, ປວດຕາມຕີນ ແລະ ມື ແລະ ອາດໃຄ່ ຫຼື ຕາຖືກທຳລາຍ) ເກີດຂຶ້ນ ຫຼື ເປັນຮ້າຍແຮງຫຼັງຈາກ ກິນຢາຈົ່ງສືບຕໍ່ກິນຢາແຕ່ຕ້ອງໄປຫາແພດ ເພື່ອຂໍຄວາມຊ່ວຍເຫຼືອ.
ການປ້ອງກັນບໍ່ໃຫ້ມື, ຕີນ ແລະ ຕາຖືກທຳລາຍ.

ບາດໃຫຍ່ ແລະ ກວ້າງຢູ່ຕີນ ຫຼື ມືຂອງຄົນເປັນຂີ້ທູດທີ່ກຸດຫັງມເຂົ້າເລື້ອຍໆນັ້ນ ບໍ່ແມ່ນເກີດມາຈາກໂລກນີ້ໂດຍກົງ ແລະ ສາມາດປ້ອງກັນໄດ້. ມັນເກີດຂຶ້ນເພາະວ່າເວລາຄົນເຈັບບໍ່ມີຄວາມຮູ້ສຶກ ເຂົາຈະບໍ່ຮູ້ຈັກປ້ອງກັນຕົນເອງຈາກອາການບາດເຈັບຕ່າງໆ.

ຕົວຢ່າງເຊັ່ນຄົນທີ່ມີຄວາມຮູ້ສຶກປົກກະຕິເວລາຍ່າງທາງໄກຕີນຈະໂພງ ເມື່ອຕີນໂພງຈະຮູ້ສຶກເຈັບ ແລ້ວຈະເຊົາຍ່າງ ດັ່ງນັ້ນລາວຈຶ່ງບໍ່ເຈັບຫຼາຍຂຶ້ນ.

ແຕ່ວ່າສຳລັບຄົນເປັນຂີ້ທູດຈະບໍ່ຮູ້ສຶກເຈັບປວດ

ເຂົາຈະຍ່າງຕໍ່ໄປອີກດັ່ງນັ້ນ ບາດທີ່ໂພງກໍ່ຈະແຕກເປັນບາດໃຫຍ່ ແລ້ວເກີດຕິດເຊື້ອ

ກໍ່ຍ້ອນວ່າມັນບໍ່ໄດ້ເຮັດໃຫ້ເຂົາຮູ້ສຶກເຈັບປວດເຂົາຈຶ່ງບໍ່ຮັກສາ ຫຼື ປິ່ນປົວມັນ. ດັ່ງນັ້ນການຕິດເຊື້ອຈຶ່ງແຜ່ລາມໄປເລື້ອຍໆຈົນຮອດກະດູກແລ້ວເລີ່ມຕົ້ນທຳລາຍກະດູກ.

ໃນຂະນະທີ່ກະດູກກຳລັງຖືກທຳລາຍ ແລະ ຕີນກໍ່ອາດຈະພິການໄດ້.



1. ປ້ອງກັນຕີນມືບໍ່ໃຫ້ເປັນບາດແຜໄຟໄໝ້ ແລະ ໂພງ.ບໍ່ຍ່າງດ້ວຍຕີນເປົ່າໂດຍສະເພາະຍ່າງ ຍິ່ງບ່ອນທີ່ມີຫີນ ຫຼື ໜາມ. ຄວນໃສ່ເກີບ ແລະ ຖົງຕີນ. ເອົາຟອງນ້ຳອ່ອນໆຮອງພື້ນ ຫຼື ເກີບ.



ເມື່ອເວລາເຮັດວຽກ ຫຼື ຄົວກິນຄວນໃສ່ຖົງມື. ຢ່າປົງໝໍ້ອອກຈາກໄຟທີ່ຮ້ອນໆ ໂດຍບໍ່ໄດ້ໃສ່ຖົງມືໜາໆ ຫຼື ໃຊ້ຜ້າຮອງ ຖ້າພໍໄດ້ຄວນຫຼີກເວັ້ນການຈັບໜາມຈັບວັດຖຸທີ່ຮ້ອນໆ. ບໍ່ສູບຢາ.

2. ຫຼັງຈາກອອກແຮງງານແຕ່ລະມື້ ຕ້ອງກວດເບິ່ງຕີນ ແລະ ມືຂອງເຮົາຢ່າງລະອຽດ ເພື່ອຢາກຮູ້ວ່າມີສ້ຽນ ໜາມ ຫຼື ເປັນບາດບໍ່. ເບິ່ງຝາຕີນ ຝາມືວ່າມີອາການບວມຊ້ຳ ຫຼື ໂພງບໍ່? ຖ້າມີຕ້ອງພັກຜ່ອນຈົນກວ່າຈະປົກກະຕິແທ້ເສຍກ່ອນເພື່ອເຮັດໃຫ້ໜັງດີຂຶ້ນແທນທີ່ຈະເຮັດໃຫ້ມັນໂພງກວ່າເກົ່າ.
3. ຖ້າຕີນຂອງທ່ານເປັນບາດຄວນຮັກສາບາດນັ້ນໃຫ້ສະອາດ ແລະ ພັກຜ່ອນຈົນກວ່າຈະດີ ແລະ ລະວັງບໍ່ໃຫ້ເປັນບາດຄືນອີກ.
4. ປ້ອງກັນຕາ. ຕາມັກຖືກທຳລາຍຍ້ອນວ່າບໍ່ໄດ້ພັບຕາພຽງພໍເພາະວ່າຂາດ ຄວາມຮູ້ສຶກ. ຄວນຈະພັບຕາຂອງເຈົ້າເອງເປັນປະຈຳເພື່ອເຮັດໃຫ້ຕາຊຸ່ມ ແລະ ສະອາດຢູ່ສະເໝີ. ເມື່ອເຈົ້າບໍ່ສາມາດພັບຕາມສົມຄວນ ຄວນຈະລັບຕາໃຫ້ແຈບ
ເລື້ອຍໆໃນມື້ໜຶ່ງໆໂດຍສະເພາະເມື່ອເວລາມີຂີ້ຝຸ່ນປິວມາ. ໃສ່ແວ່ນຕາດຳກັນແດດ ແລະ ໝວກກັນແດດ. ຮັກສາຄວາມສະອາດໃຫ້ຕາຢູ່ສະເໝີ ແລະ ບໍ່ໃຫ້ແມງວັນມາຕອມ.



ຖ້າທ່ານເຮັດຄືສິ່ງທີ່ກ່າວມານີ້ ແລະ ປິ່ນປົວແຕ່ຕອນເລີ່ມຕົ້ນເປັນ. ຄວາມພິການທັງໝົດຂອງຂີ້ທູດກໍ່ສາມາດປ້ອງກັນໄດ້. ທ່ານສາມາດຫາຂໍ້ມູນເພີ່ມເຕີມກ່ຽວກັບໂລກຂີ້ທູດໄດ້ຈາກປຶ້ມ ເດັກນ້ອຍພິການໃນບ້ານ (Disabled Village Children) ໃນບົດທີ 26.

HLI Seattle
Health Leadership International
Field Draft Copy